ລຳຜູ້ໄທ

| | | |
|---|---|---|
| ຊາຍເອີຍ | ນີ້ຄືສຽງຄວນໄຫ້ | ສາວຜູ່ໄທໄດ້ພັດຖິ່ນ |
| | ນາງໄດ້ຍິນອ້າຍຮ້ອງ | ຄຳກອນກ້ອງອ້າຍສົ່ງມາ |
| ປາຖນາ | ຄິດເຫັນເດຕັ້ງແຕ່ຄັ້ງ | ຄາວເມື່ອຍັງເດັກ |
| | ໃກຈາກເຮືອນຊານເດີມ | ຖິ່ນເຮົາຢູ່ທາງບ້ານ |
| ຕອນນັ້ນ | ຢືນຢູ່ປາຍຊານນ້ອຍ | ຄອຍຊາຍອ້າຍມາຫມ່າຍ |
| | ຫວັງຈະເຫັນຫນ້າອ້າຍ | ເດີນຜ້າຍຫມ່າຍພະນາງ ອ້າຍເອີຍ |
| ບາງວັນ | ອ້າຍກໍຫລົບຫຼີກລີ້ | ເດີນຫມ່າຍໄປທາງຫຼັງ |
| | ຫຼືອ້າຍຊັງສຽງເພງ | ນ້ອງອ່ອຍຊາຍທຸກແລງເຊົ້າ |
| | ປາຖນາເປັນນາມເຄົ້າ | ຂອງຊາຍອ້າຍຈຳຈີ່ |
| ຊີ່ນີ້ | ນ້ອງໄດ້ຈາຣຶກໄວ້ | ຊຶມເຂົ້າຢູ່ວ່າງໃຈ |
| | ປາຖນາ ຄືນເລີ່ມຕົ້ນ | ຄືນທີຫນຶ່ງໃນຊີວິດ |
| | ປາຖນາ ຄືດວງຈິດ | ບໍ່ອາດວາງໃຫ້ໃຜໄດ້ |
| | ປາຖນາ ຄຽງໃຈນ້ອງ | ສີພັນດອນຢ່າງມີຄ່າ |
| ປາຖນາ | ດອນຫັວງເປັນເພື່ອນແທ້ | ແຕ່ຊາຍປີ້ນປ່ຽນແປງ ອ້າຍເອີຍ |
| | ປາຖນາໄດ້ຮັກຫມັ້ນ | ຍິງຄືນໃຫມ່ນັກຮຽນຄຣູ |
| | ເປັນຄູ່ຄອງທີ່ເຫມາະສົມ | ຄູ່ນິຍົມທີ່ຫວານຊື່ນ |
| | ທຸກຄືນວັນດອນເຫັນອ້າຍ | ຊາຍຄຽງນາງໄປເປັນຄູ່ |
| ບ່າວນາຍຄຣູສາວນາຍຄຣູ | ແຖມຍັງຮຽນຮ່ວມຫ້ອງ | ປະມານຊັ້ນກໍຊໍ່າກັນ |
| ດອນນີ້ | ເຖີງຈະເປັນຮຸ່ນເອື້ອຍ | ກໍພຽງແຕ່ການສຶກສາ |
| | ອາຍຸເຮົາພໍປານກັນ | ອ້າຍຜ່ານກາຍຫມາຍຮ້າງ |
| | ອ້າຍເລີຍວາງດອນຖິ້ມ | ໄປຄຽງຄຣູຊູ້ຄືນໃຫມ່ |
| | ບໍ່ອາລັຍລໍ່າຫນ້າ | ຜູ່ໄທນ້ອງກ່ອງນ້ຳຕາ ອ້າຍເອີຍ |
| ຈາກນັ້ນ | ເຫມືອນຢູ່ຄົນລະຟາກຟ້າ | ສອງເຮົາຫ່າງລາຫນີ |
| | ຊີວິດນາງແສນໂສກີ | ຊີວິດຊາຍອ້າຍເລີງລົ້ນ |
| | ທຸກຄືນວັນນ້ອງນອນໄຫ້ | ນ້ຳຕາໄຫຼບໍ່ຂາດເຄື່ອນ |

| | | |
|---|---|---|
| | ຊີວິດເລືອນລ່ອງຟ້າ | ຫາຈັ້ງທີ່ບໍ່ມີ |
| ຈິນວ່າ | ຈິນມາຮອດມື້ນີ້ | ເວລາຜ່ານກາຍໜີ |
| | ສາມສິບປີຈຶ່ງມາພົບ | ຈວບກັນເວລານ້ອຍ |
| | ປາຖນາອ້າຍລອຍສູ້ | ຊີວິຊາຍຊ່າງສູງຄ່າ |
| ປາຖນາ | ອ້າຍເຫມືອນທັງຢູ່ຟ້າ | ກາດຳນ້ອຍພັດແມ່ນດອນ ນີ້ແລ້ວ |
| ຊາຕນີ້ | ດອນໄດ້ແຕ່ໄຫ້ | ປຣາຊັຍພ່າຍຄວາມຮັກ |
| | ຈັກແມ່ນກັນແຕ່ປາງໃດ | ຈຶ່ງຈ່ອງນຳບໍ່ວາງເວັ້ນ |
| | ມາເຫັນຊາຍອ້າຍສູງໜ້າ | ສາວກາດຳໄດ້ແຕ່ຮ່ຳ |
| | ພູມໃຈນຳແຕ່ອ້າຍ | ໃຫ້ສົມແມ້ງປາຖນາ ອ້າຍເອີຍ..... |